# ປົກປ້ອງຕົວຂອງທ່ານ
# ຈາກສານກຳຈັດສັດຕູພືດ

## 1 ສິ່ງທີ່ຄວນຫຼີກລ່ຽງ...

- ການໄດ້ຮັບສານກຳຈັດສັດຕູພືດຜ່ານເຂົ້າທາງຜິວໜັງ ຫຼື ຮ່ອງກາຍ.
- ສານເຄມີທີ່ອາດຕົກຄ້າງຢູ່ໃນພືດ, ດິນ, ຮ່ອງນ້ຳ, ລົດໄຖນາ, ແລະ ອຸປະກອນເຄື່ອງໃຊ້ອື່ນໆ, ແລະ ຊຸດປ້ອງກັນຄວາມປອດໄພສ່ວນບຸກຄົນ ຫຼື ເຄື່ອງມືທີ່ນຳໃຊ້ແລ້ວ (PPE).
- ສານກຳຈັດສັດຕູພືດທີ່ລອຍມານຳອາກາດໃນລະຫວ່າງການສີດພົ່ນໃນເຂດພື້ນທີ່ໃກ້ຄຽງ.

*ຈົ່ງສວມໃສ່ເສື້ອແຂນຍາວ, ໂສ້ງຂາຍາວ, ເກີບ, ຖົງຕີນ, ແລະ ໝວກ ຫຼື ຜ້າພັນຄໍ ເພື່ອປ້ອງກັນຮ່າງກາຍຂອງທ່ານຈາກສານເຄມີຕົກຄ້າງ.*




## 2 ຈົ່ງຢູ່ໃຫ້ຫ່າງ...

- ຈາກເຂດພື້ນທີ່ທີ່ໄດ້ຮັບການບຳບັດເມື່ອມີການແຈ້ງບອກ, ເມື່ອໃດກໍຕາມທີ່ທ່ານຫາກເຫັນສັນຍານຊີ້ບອກ, ແລະ ເມື່ອມີການນຳໃຊ້ຢາປາບສັດຕູພືດ (ເຂດພື້ນທີ່ການນຳໃຊ້ສານກຳຈັດສັດຕູພືດ).




## 3 ຈົ່ງລ້າງ...

- ມືຂອງທ່ານທັນທີກ່ອນກິນເຂົ້າ, ດື່ມນ້ຳ, ສູບຢາ, ຄ້ຽວໝາກຝຣັ່ງ ຫຼື ຢາສູບ, ແລະ ກ່ອນນຳໃຊ້ຫ້ອງນ້ຳ ຫຼື ໂທລະສັບຂອງທ່ານ.
- ອາບນ້ຳ ແລະ ສະຜົມດ້ວຍນ້ຳ, ສະບູ, ແລະ ຢາສະຫົວ, ແລະ ນຸ່ງເສື້ອຜ້າທີ່ສະອາດຫຼັງຈາກແລ້ວວຽກ.
- ຊຸດເຮັດວຽກຂອງທ່ານພາຍຫຼັງທີ່ໄດ້ໃຊ້ງານທຸກຄັ້ງ. ແຍກໄວ້ໃຫ້ຫ່າງຈາກເຄື່ອງນຸ່ງຫົ່ມທີ່ບໍ່ແມ່ນຊຸດເຮັດວຽກ.




## 4 ການປະຕິບັດ...



- ຖ້າສານກຳຈັດສັດຕູພືດຫາກເກີດການຮົ່ວໄຫຼ ຫຼື ສີດຖືກຮ່າງກາຍຂອງທ່ານ, ໃຫ້ຮີບລ້າງອອກທັນທີ. ຕ້ອງຈັດກຽມນ້ຳ, ສະບູ ແລະ ຜ້າຂົນໜູໄວ້ຢູ່ໃກ້ໆ (ອຸປະກອນກຳຈັດສິ່ງປົນເປື້ອນ). ຫາກອຸປະກອນຈັດໄວ້ໄກ, ໃຫ້ລ້າງອອກດ້ວຍນ້ຳສະອາດ ອາດຈະໃຊ້ນ້ຳກ້ອກ, ຫ້ວຍນ້ຳ ຫຼື ໜອງນ້ຳ.
- ອາບນ້ຳສະລ້າງຮ່າງກາຍພ້ອມສະຜົມດ້ວຍນ້ຳ, ສະບູ ແລະ ແຊມພູໂດຍຮີບດ່ວນ ແລະ ນຸ່ງເສື້ອຜ້າທີ່ສະອາດ.

**ຫາກທ່ານຄິດວ່າສານກຳຈັດສັດຕູພືດເປັນຕົວການກໍ່ໃຫ້ເກີດການບາດເຈັບ, ລົ້ມປ່ວຍ ຫຼື ເປັນພິດ ໃຫ້ຮີບຮ້ອນພົບທ່ານໝໍໂດຍດ່ວນ.**

## ໃນກລະນສຸກເສີນ: ຄຳຖາມ ຫຼື ຂໍ້ຂ້ອງໃຈ:

| ຂໍຄວາມຊ່ວຍເຫຼືອທາງການແພດທີ່ຢູ່ໃກ້ສຸດ: | ຫາກທ່ານຕ້ອງການລົດໂຮງໝໍ, ຈົ່ງບອກພວກເຂົາ: | ໂທຕິດຕໍ່ຫາໜ່ວຍງານຄຸ້ມຄອງສານກຳຈັດສັດຕູພືດຂອງລັດ ຫຼື ຊຸມຊົນ: |
|---|---|---|
| ຊື່: | ຊື່: | ຊື່: |
| ທີ່ຢູ່: | ທີ່ຢູ່: | ທີ່ຢູ່: |
| ເບີໂທ: | ເບີໂທ: | ເບີໂທ: |

ສຳລັບຂໍ້ມູນການປິ່ນປົວຮັກສາທາງການແພດ, ສາມາດໂທຫາສູນຄວບຄຸມສານພິດ:

**1.800.222.1222**

ເນື້ອໃນຂອງໂປດສະເຕີນີ້ ຖືເປັນການແປພາສາ ພາສາລາວ ຈາກສະບັບຕົ້ນທີ່ເປັນພາສາອັງກິດ.
ໃນກໍລະນີທີ່ມີຄວາມຂາດເຄື່ອນໃດໆ, ໃຫ້ຖືເອົາສະບັບພາສາອັງກິດເປັນຫຼັກ.

EPA

ຫາກມີຄຳຖາມກ່ຽວຂ້ອງກັບສານກຳຈັດສັດຕູພືດ? ໂທ:

**1.800.858.7378**

(ສູນຂໍ້ມູນສານກຳຈັດສັດຕູພືດແຫ່ງຊາດ)